ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ: 1462 /ກງ

ນະຄອນຫຼວງວຽງຈັນ, ວັນທີ: 17 ພຶດສະພາ 2019.

# ຂໍ້ຕົກລົງ

ວ່າດ້ວຍການຢຸດຕິດຳເນີນການນຳເຂົ້າເພື່ອສົ່ງອອກຕໍ່ (ສິນຄ້າປະເພດພາຫະນະ) ໄປປະເທດທີສາມ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 358/ຫສນຍ.ກຄສ, ລົງວັນທີ 13 ມີນາ 2018 ກ່ຽວກັບທິດຊີ້ນຳກ່ຽວກັບການຂໍອະນຸຍາດນຳເຂົ້າພາຫະນະເພື່ອສົ່ງອອກໄປປະເທດທີສາມ;
- ອີງຕາມ ບົດແນະນຳຂອງກະຊວງການເງິນ ສະບັບເລກທີ 1409/ກງ, ລົງວັນທີ 10 ພຶດສະພາ 2018 ວ່າດ້ວຍການຄຸ້ມຄອງການນຳເຂົ້າເພື່ອສົ່ງອອກຕໍ່ສິນຄ້າປະເພດພາຫະນະ;
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 0326/ກພສ, ລົງວັນທີ 30 ເມສາ 2019.

## ລັດຖະມົນຕີກະຊວງການເງິນ ຕົກລົງ:

ມາດຕາ 1: ເຫັນດີລົບລ້າງ ບົດແນະນຳຂອງກະຊວງການເງິນ ສະບັບເລກທີ 1409/ກງ, ລົງວັນທີ 10/05/2018 ວ່າດ້ວຍການຄຸ້ມຄອງການນຳເຂົ້າເພື່ອສົ່ງອອກຕໍ່ສິນຄ້າປະເພດພາຫະນະ;

ມາດຕາ 2: ໃຫ້ບັນດາບໍລິສັດທີ່ດຳເນີນການນຳເຂົ້າເພື່ອສົ່ງອອກ (ຕໍ່ສິນຄ້າປະເພດພາຫະນະ ຄື: ບໍລິສັດ ໂຕໂຍຕ້າລາວທານີ ຈຳກັດ, ບໍລິສັດ ລາວໂຕໂຍຕ້າບໍລິການ ຈຳກັດ, ບໍລິສັດ ໂຕໂຍຕ້າຈຳປາ ຈຳກັດ ແລະ ບໍລິສັດ ລາວອິນເຕີເຊັນໂນໂລຈີສຕິກ ຈຳກັດຜູ້ດຽວ ແລະ ອື່ນໆ) ຢຸດຕິການດຳເນີນການນຳເຂົ້າເພື່ອສົ່ງຕໍ່ສິນຄ້າປະເພດພາຫະນະ ໄປປະເທດທີສາມ ເລີ່ມແຕ່ມື້ລົງລາຍເຊັນຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ;

ມາດຕາ 3: ມອບໃຫ້ກົມພາສີ ສະຫຼຸບສັງລວມການຈັດຕັ້ງປະຕິບັດໃນໄລຍະທີ່ຜ່ານມາ ເພື່ອລາຍງານລັດຖະບານຮັບຊາບ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 358/ກງ, ລົງວັນທີ 13 ມີນາ 2018 ທີ່ໄດ້ກຳນົດລະອຽດໃນຂໍ້ທີ 4;

ມາດຕາ 4: ມອບໃຫ້ກົມພາສີ, ກົມສ່ວຍສາອາກອນ, ຂະແໜງການທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;

ມາດຕາ 5: ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງການເງິນ

ບ່ອນສົ່ງ:

| | |
|---|---|
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ (ເພື່ອຊາບ). |
| - ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ (ເພື່ອຊາບ). |
| - ກະຊວງໂຍທາທິການ ແລະ ຂົນສົ່ງ | 01 ສະບັບ (ເພື່ອຊາບ). |
| - ກົມພາສີ, ກົມສ່ວຍສາອາກອນ, ກົມລະ | 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ). |
| - ບັນດາບໍລິສັດ, ບໍລິສັດລະ | 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ). |
| - ສຳເນົາ | 01 ສະບັບ. |

ກະຊວງການເງິນ

ສົມດີ ດວງດີ